## II. ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ (ປະຈຳໄຕມາດ III ປີ 2016)

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໃນໄຕມາດທີ່ຜ່ານມາທຽບກັບໄຕມາດນີ້ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 2,6%, S&P500 3,55% ແລະ NASDAQ 9,32%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ຜູ້ລົງທຶນເລີ່ມຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖານະການວິກິດການ Brexit ພາຍຫຼັງຈາກທີ່ບັນດາຜູ່ວ່າການຂອງທະນາຄານກາງຂອງປະເທດຜູ້ນຳເສດຖະກິດໂລກ ໄດ້ສະແດງທ່າທີຢ່າງຊັດເຈນໃນຄວາມພ້ອມທີ່ຈະດຳເນີນມາດຕະການຂອງຕົນ, ກະຊວງແຮງງານ ສ.ອາເມລິກາ ໄດ້ລາຍງານວ່າ ຈຳນວນປະຊາຊົນຜູ່ຂໍຮັບສະຫວັດດີການວ່າງງານຕາມລາຍງານລ່າສຸດ ແມ່ນຄົງໂຕທີ່ຈຳນວນ 254.000 ຄົນ ເຊິ່ງໃກ້ກັບຈຳນວນ 248.000 ຄົນ ໂດຍເປັນລະດັບຕໍ່າສຸດໃນຮອບ 43 ປີ ແລະ ຄະນະກຳມະການນະໂຍບາຍການເງິນຂອງທະນາຄານກາງ ສ.ອາເມລິກາ ມີມະຕິບໍ່ເປັນເອກະສັນ 7 ຕໍ່ 3 ໂດຍສຽງສ່ວນໃຫ່ຍແມ່ນໃຫ້ຄົງອັດຕາດອກເບ້ຍທີ່ລະດັບ 0,25%-0,5% ຄືເກົ່າ ແລະ ຍັງມີແນວໂນ້ມທີ່ຈະປັບຂຶ້ນ 1 ຄັ້ງໃນປີນີ້ເນື່ອງຈາກປັດໃຈຕະຫຼາດແຮງງານຂອງປະເທດຍັງຄົງມີຄວາມເຂັ້ມແຂງ ການສົ່ງສັນຍານດັ່ງກ່າວສະແດງໃຫ້ເຫັນວ່າ FED ຈະຍັງບໍ່ປັບຂຶ້ນອັດຕາດອກເບ້ຍໃນຊ່ວງເວລານີ້ ຫຼື ອາດຈະລໍຖ້າຈົນເຖິງການປະຊຸມຄັ້ງຖັດໄປໃນວັນທີ 1-2 ພະຈິກ 2016 ຫຼື 13-14 ທັນວາ 2016 ນີ້.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວເພີ່ມຂຶ້ນ 0,84%, ຝຣັ່ງ (CAC40) 0,97%, ເຢຍລະມັນ (DAX) 4,2%, ລຸກຊຳບວກ (LUXXX) 6,56% ແລະ ອັງກິດ (FTSE100) 9,77%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ທ່ານນາງ ແອງເກລ້າ ແມເຄີ້ ນາຍົກລັດຖະມົນຕີ ເຢຍລະມັນ ແລະ ເປັນຜູ້ທີ່ມີບົດບາດຕໍ່ກັບທິດທາງນະໂຍບາຍຂອງກຸ່ມຊົງເຂດເອີຣົບ ໄດ້ສະແດງຄວາມເຫັນວ່າ ຜົນກະທົບຂອງ Brexit ຈະບໍ່ສົ່ງຜົນກະທົບຮຸນແຮງຕໍ່ກັບເສດຖະກິດເຢຍລະມັນ ເຊິ່ງເຢຍລະມັນຖືໄດ້ວ່າເປັນຊາດທີ່ມີເສດຖະກິດເຂັ້ມແຂງ ແລະ ມີບົດບາດສຳຄັນຕໍ່ຊົງເຂດເອີຣົບ ລວມທັງ ທະນາຄານກາງ ອັງກິດ ໄດ້ປະກາດປັບຫຼຸດອັດຕາດອກເບ້ຍລົງ 0,25% ພ້ອມທັງເພີ່ມວົງເງິນໃນໂຄງການຊື້ພັນທະບັດຕາມມາດຕະການຜ່ອນຄາຍເຊີງປະລິມານ QE ອີກ 60 ພັນລ້ານປອນ ເພື່ອກະຕຸ້ນເສດຖະກິດ ແລະ ຈາກການທີ່ ທະນາຄານກາງ ສ.ອາເມລິກາ ສະແດງທ່າທີທີ່ຈະບໍ່ເລັ່ງປັບຂຶ້ນອັດຕາດອກເບ້ຍ ແລະ ທະນາຄານກາງ ຍີ່ປຸ່ນ ສົ່ງສັນຍານການກະຕຸ້ນເສດຖະກິດຮອບໃໝ່ ໄດ້ກາຍເປັນປັດໃຈສະໜັບສະໜູນ ແລະ ໃຫ້ບັນຍາກາດການຊື້-ຂາຍໃນຕະຫຼາດຫຼັກຊັບໃນເອີຣົບໃຫ້ກັບມາຄຶກຄື້ນອີກຄັ້ງໃນຊ່ວງທ້າຍຂອງເດືອນ ກັນຍາ 2016 ນີ້.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວເພີ່ມຂຶ້ນ 3,82%, ໄຕ້ຫວັນ (TWSE) 6,26%, ສິງກະໂປ (STRAIT TIMES) 2,2%, ສ.ເກົາຫຼີ (KOSPI) 2,69%, ມາເລເຊຍ (FBMLCI) 1,28%, ຍີ່ປຸ່ນ (NIKKEI225) 3,95%, , ສປ.ຈີນ (SHANGHAI) 5,12%, ສປ.ຈີນ (SHENZHEN) 6,13%, ຕະຫຼາດຫຼັກຊັບ ໄທ (SET) 3,94%, ສສ. ຫວຽດນາມ (HOCHIMIN) 9,27%, ອົດສະຕາລີ (S&P/ASX200) 2,57%, ອິນໂດເນເຊຍ (JCI) 9,51%, ຮ່ອງກົງ (HANG SENG) 14,52% ຍົກເວັ້ນ ຕະຫຼາດຫຼັກຊັບ ຟີລິບປິນ (PCOMP) ປັບຕົວຫຼຸດລົງ -1,18%, ກຳປູເຈຍ (CSX) ປັບຕົວຫຼົດລົງ -6,24%, ສສ.ຫວຽດນາມ (HANOI) -1,48%, ແລະ ມຽນມ້າ (MYANPIX) -30,44% ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ອາຊີ ສ່ວນໃຫຍ່ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ທະນາງຄານກາງຂອງ ສ.ປ ຈີນ ໄດ້ປະກາດວ່າຈະຍັງຄົງໃຊ້ນະໂຍບາຍການເງິນທີ່ມີຄວາມເໝາະສົມ ແລະ ຫຼາກຫຼາຍເພື່ອຮັກສາສະພາບຄ່ອງທີ່ພຽງພໍ ເຊິ່ງມີການປ່ອຍສິນເຊື່ອທີ່ ເໝາະສົມ ແລະ ປັບປຸງການປັບໂຄງສ້າງທາງການເງິນ ເພື່ອຫຼຸດຕົ້ນທຶນໃນການລະດົມທຶນໃນຕະຫຼາດ ນອກນີ້ ຜູ້ລົງທຶນເລີ່ມຄາດຫວັງນະໂຍບາຍກະຕຸ້ນເສດຖະກິດເພີ່ມເຕີມຂອງ ລັດຖະບານທ່ານ ຊິນໂສະ ອາເບະ ອີກຄັ້ງ ຫຼື ABENOMIC ເຊິ່ງຜູ້ລົງທຶນເລີ່ມເຊື່ອໝັ້ນວ່າ ລັດຖະບານຍີ່ປຸ່ນຈະດຳເນີນນະໂຍບາຍເສີມທາງດ້ານການເງິນ ເຊັ່ນດຽວກັນກັບທະນາຄານກາງ ຍີ່ປຸ່ນ (BOJ) ທີ່ຈະດຳເນີນນະໂຍບາຍຜ່ອນຄາຍທາງການເງິນອີກດ້ວຍ ໂດຍໃນຊ່ວງທ້າຍເດືອນ ກັນຍາ ປີ 2016 ທະນາຄານກາງ ຍີ່ປຸ່ນ ກໍ່ໄດ້ປະກາດການດຳເນີນນະໂຍບາຍກະຕຸ້ນເສດຖະກິດໃໝ່ດ້ວຍການກຳນົດນະໂຍບາຍອັດຕາຜົນຕອບແທນຂອງພັນທະບັດລັດຖະບານອາຍຸ 10 ປີ ດ້ວຍແຜນການເຂົ້າຊື້ພັນທະ ບັດລັດຖະບານຄືນ ແລະ ທັງຍັງຄົງແນວທາງນະໂຍບາຍອັດຕາດອກເບ້ຍຕິດລົບ 0,1% ພ້ອມດ້ວຍນະໂຍບາຍຍືດຍຸ່ນທາງການເງິນເພື່ອກະຕຸ້ນເສດຖະກິດ ເຊິ່ງບັນດາປັດໃຈດັ່ງກ່າວໄດ້ກາຍເປັນແຮງສົ່ງໃຫ້ດັດຊະນີຕະຫຼາດຫຼັກຊັບອາຊີປັບຕົວສູງຂຶ້ນ.

## II. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ປິດຢູ່ທີ່ 965,07 ຈຸດ ຫຼຸດລົງ 14,40% ເມື່ອທຽບໃສ່ໄຕມາດຜ່ານມາ, ຕະຫຼອດໄຕມາດມີປະລິມານຊື້-ຂາຍຮຸ້ນທັງໝົດ 2,15 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 10,62 ຕື້ກີບ ຫຼຸດລົງ 9,26% ທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,36% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.672 ກີບ ເພີ່ມຂຶ້ນ 262 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 323.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,51 ຕື້ກີບ ຫຼຸດລົງ 69% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 39,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,35%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.093 ກີບ ຫຼຸດລົງ 623 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,74 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,89 ຕື້ກີບ ເພີ່ມຂຶ້ນ 53,69% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 58,83% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.400 ກີບ ເພີ່ມຂຶ້ນ 67 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,92 ລ້ານກີບ ຫຼຸດລົງ 66,32% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 66,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.547 ກີບ ຫຼຸດລົງ 82 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 70.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 178,83 ລ້ານກີບ ຫຼຸດລົງ 79,75% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 48,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.096 ກີບ ຫຼຸດລົງ 70 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 13.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 41,18 ລ້ານກີບ ຫຼຸດລົງ 73,62% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 68,63% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄໍາ

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

### ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| 2016 | ໄຕມາດ 2 | | ໄຕມາດ 3 | | % ການປ່ຽນແປງ | |
|---|---|---|---|---|---|---|
| | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ | ມູນຄ່າການຊື້ຂາຍ |
| BCEL | 1.107.000 | 4.881.390.000 | 323.900 | 1.513.230.000 | -70,74 | -69,00 |
| EDL-GEN | 1.012.400 | 5.786.710.000 | 1.746.300 | 8.893.340.000 | 72,49 | 53,69 |
| LWPC | 900 | 5.700.000 | 300 | 1.920.000 | -66,67 | -66,32 |
| PTL | 335.800 | 883.040.000 | 70.200 | 178.830.000 | -79,09 | -79,75 |
| SVN | 49.300 | 156.100.000 | 13.300 | 41.180.000 | -73,02 | -73,62 |
| ທັງໝົດ | 2.505.400 | 11.712.940.000 | 2.154.000 | 10.628.500.000 | -14,03 | -9,26 |

### ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ

(ວັນທີ 11 ມັງກອນ - 22 ກັນຍາ 2016)




### ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(ເດືອນ ມິຖຸນາ - ກັນຍາ 2016)

ຫົວໜ່ວຍ: ລ້ານກີບ



**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດຊະນີໃນໄຕມາດນີ້ | ດັດຊະນີໃນໄຕມາດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 18.293,7 | 17.829,73 | 463,97 | 2,60 |
| NASDAQ | ສ.ອາເມລິກາ | 5.295,18 | 4.843,76 | 451,42 | 9,32 |
| S&P500 | ສ.ອາເມລິກາ | 2.163,12 | 2.088,9 | 74,22 | 3,55 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.347,27 | 1.336,1 | 11,17 | 0,84 |
| DAX | ເຢຍລະມັນ | 10.436,49 | 10.015,54 | 420,95 | 4,20 |
| FTSE100 | ອັງກິດ | 6.834,77 | 6.226,55 | 608,22 | 9,77 |
| CAC40 | ຝຣັ່ງ | 4.409,55 | 4.367,24 | 42,31 | 0,97 |
| LUXXX | ລຸກຊໍາບວກ | 1.557,715 | 1.461,809 | 95,906 | 6,56 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 16.807,62 | 16.169,11 | 638,51 | 3,95 |
| KOSPI | ສ.ເກົາຫຼີ | 2.035,99 | 1.982,70 | 53,29 | 2,69 |
| HANGSHENG | ຮ່ອງກົງ | 23.669,9 | 20.668,44 | 3.001,46 | 14.52 |
| TWSE | ໄຕ້ຫວັນ | 9.228,50 | 8.684,85 | 543,65 | 6,26 |
| SHANGHAI | ສປ. ຈີນ | 3.025,87 | 2.878,56 | 147,31 | 5,12 |
| SHENZHEN | ສປ. ຈີນ | 2.005,596 | 1.889,71 | 115,885 | 6,13 |
| S&P/ASX200 | ອົດສະຕາລີ | 5.339,60 | 5.274,40 | 65,2 | 1,24 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 9.352,68 | 9.008,63 | 344,05 | 3,82 |
| STRAIT TIME | ສິງກະໂປ | 2.850,74 | 2.789,45 | 61,29 | 2,20 |
| SET | ໄທ | 1.487,17 | 1.430,80 | 56,37 | 3,94 |
| FBMLCI | ມາເລເຊຍ | 1.658,73 | 1.637,69 | 21,04 | 1,28 |
| JCI | ອິນໂດເນເຊຍ | 5.342,59 | 4.878,71 | 463,88 | 9,51 |
| PCOMP | ຟີລິບປິນ | 7.675,42 | 7.767,23 | -91,81 | -1,18 |
| HOCHIMIN | ສສ. ຫວຽດນາມ | 668,48 | 628,00 | 40,48 | 6,45 |
| HANOI | ສສ. ຫວຽດນາມ | 83,25 | 84,50 | -1,25 | -1,48 |
| CSX | ກໍາປູເຈຍ | 348,16 | 371,35 | -23,19 | -6,24 |
| LSX | ສປປ. ລາວ | 981,43 | 1.128,83 | -147,4 | -13,06 |
| MYANPIX | ມຽນມ້າ | 606,99 | 872,67 | -265,68 | -30,44 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 2.982,23 | 2.770,42 | 211,81 | 7,6 |
| SET BANK | ໄທ | 498,84 | 456,02 | 42,82 | 9,4 |